

# ບົດທີ 4

# ການຄົ້ນຫາສິ່ງທີ່ລູກຂອງທ່ານສາມາດເຫັນ.

ເດັກນ້ອຍຫຼາຍໆຄົນຜູ້ທີ່ມີຄວາມຫຍຸ້ງຍາກໃນການເບິ່ງ ຮ້ອຍສ່ວນຮ້ອຍແມ່ນຕາບອດ ແຕ່ວ່າສາມາດເຫັນໜ້ອຍໜຶ່ງ. ເດັກນ້ອຍບາງຄົນສາມາດເຫັນຕ່າງກັນ ລະຫວ່າງບ່ອນແຈ້ງ ແລະ ບ່ອນມືດ ແຕ່ວ່າບໍ່ສາມາດເຫັນວັດຖຸອັນໃດອັນໜຶ່ງ. ເດັກນ້ອຍຜູ້ອື່ນສາມາດເຫັນວັດຖຸ ຖ້າຫາກວ່າພວກມັນຢູ່ໃນສະຖານທີ່ທີ່ແນ່ນອນ, ຢູ່ໃນປະເພດຄວາມສະຫວ່າງທີ່ແນ່ນອນ, ຫຼືວ່າ ຖ້າຫາກວ່າພວກ ເຂົາຢູ່ໃນຂອບເຂດທີ່ແນ່ນອນ ຫຼືວ່າ ບ່ອນທີ່ມີ ສີແຈ້ງສະຫວ່າງ. ເດັກນ້ອຍບາງຄົນສາມາດເຫັນການເຄື່ອນໄຫວ.

ກ່ອນທີ່ຈະເລີ່ມຕົ້ນເຮັດກິດຈະກຳຢູ່ໃນປຶ້ມຫົວນີ້, ມັນແມ່ນສຳຄັນໃນການຄົ້ນຫາສິ່ງທີ່ລູກຂອງທ່ານສາມາດເຫັນ, ການຮຽນຮູ້ນີ້ຈະຊ່ວຍໃຫ້ທ່ານເຮັດກິດຈະກຳໃນຫຼາຍທາງທີ່ຈະຊ່ວຍລູກຂອງທ່ານຮຽນຫຼາຍທີ່ສຸດ.

ຖ້າຫາກວ່າລູກຂອງທ່ານສາມາດເຫັນໜ້ອຍໜຶ່ງ, ການຮູ້ວ່າລາວເຫັນດີທີ່ສຸດໄດ້ແນວໃດ ນອກຈາກນັ້ນຍັງໝາຍຄວາມວ່າ ທ່ານສາມາດເລືອກກິດຈະກຳທີ່ຈະຊ່ວຍລູກຂອງທ່ານເຮັດສິ່ງທີ່ມີຢູ່ໃນໄລຍະທີ່ເບິ່ງເຫັນໄດ້ດີທີ່ສຸດ.




ການໃຊ້ສາຍຕາ ບໍ່ແມ່ນການນຳໄປສູ່ການສູນເສຍມັນ. ຕາລູກຂອງທ່ານຈະບໍ່ເຈັບ ຖ້າຫາກວ່າ ລາວໃຊ້ແສງຕາຂອງລາວຊ່ວຍລາວເຮັດສິ່ງໃດສິ່ງໜຶ່ງ

## ຕາຂອງລູກຂ້ອຍບອດຢ່າງສົມບູນ ຫຼືວ່າ ລາວສາມາດເຫັນໜ້ອຍໜຶ່ງບໍ່?

ຖ້າຫາກວ່າທ່ານບໍ່ແນ່ໃຈວ່າລູກຂອງທ່ານຍັງເບິ່ງເຫັນຫຼືບໍ່, ສັງເກດເບິ່ງເພື່ອຈະຮູ້:

ລາວອັດຕາຂອງລາວຢູ່ ໃນບ່ອນທີ່ແຈ້ງສະຫວ່າງ ຫລື ລາວປິ່ນຫົວຂອງ ລາວໄປຫາແສງສະ ຫວ່າງບໍ່?



ຫລືວ່າລາວນຳວັດຖຸເຂົ້າ ມາຢູ່ໃກ້ຕາຂອງ ລາວ)



ລາວໃຊ້ຫົວຂອງລາວຕິດ ຕາມການເຄື່ອນ ໄຫວຂອງວັດ ຖຸຢ່າງຊ້າບໍ່?



ລາວຫງ່ຽງຫົວຂອງລາວ ຢູ່ໃນທາງທີ່ນອນສະ ເໝີບໍ່?



ລາວເຄື່ອນຍ້າຍມື ຂອງລາວໄປທາງ ໜ້າ ຫຼືວ່າ ກັບ ຄືນບໍ່?



ລາວຢື້ມືໄປເຖິງ ວັດຖຸບໍ່ມີສຽງນັ້ນ ບໍ່?



ຖ້າຫາກວ່າເຈົ້າສັງເກດເບິ່ງບາງສິ່ງບາງຢ່າງເຫຼົ່ານີ້, ທ່ານສາມາດຮຽນຕື່ມກ່ຽວກັບສິ່ງທີ່ພວກ ເຂົາໝາຍເຖິງໂດຍການອ່ານສອງ ຫຼືວ່າ ສາມໜ້າຢູ່ຂ້າງໜ້າ.

# ລູກຂອງຂ້ອຍເຫັນຫຍັງແດ່?

## ແສງສະຫວ່າງຊະນິດໃດທີ່ຊ່ວຍໃຫ້ລູກຂອງຂ້ອຍເຫັນດີທີ່ສຸດ?

ເດັກນ້ອຍບາງຄົນອາດຈະມີບັນຫາໃນການປັບຕົວກັບການປ່ຽນແປງຂອງຄວາມກ້າຂອງແສງ ຫລືວ່າ ລູກຂອງທ່ານອາດຈະບໍ່ສາມາດເຫັນສິ່ງຂອງໃນບ່ອນທີ່ມີແສງແນວອື່ນ.

ສັງເກດເບິ່ງ ຖ້າຫາກວ່າລູກຂອງທ່ານເຮັດຕານ້ອຍລົງ ເພື່ອໃຫ້ເຫັນດີ ຫຼືວ່າ ມັກຫຼຽວເບິ່ງສິ່ງຂອງຢູ່ໃນບ່ອນແຈ້ງສະຫວ່າງ. ລາວອາດຈະເຫັນດີທີ່ສຸດ ເມື່ອແສງນັ້ນບໍ່ແຈ້ງເກີນໄປ ຫລື ເມື່ອມີອາກາດຂຸ່ນມົວ.



ສັງເກດເບິ່ງ ຖ້າຫາກວ່າລູກຂອງທ່ານມັກເບິ່ງສິ່ງຂອງໃນບ່ອນທີ່ແຈ້ງດີ ຫລືບ່ອນທີ່ມີແສງສະຫວ່າງກ້າໆ



ທິດທາງຂອງແສງມາອາດຈະມີຜົນກະທົບຕໍ່ສິ່ງທີ່ລູກຂອງທ່ານສາມາດເຫັນ. ພະຍາຍາມປ່ຽນບ່ອນຢູ່ຂອງແສງ ຄືດັ່ງທີ່ລາວເຮັດໜ້າທີ່ແຕກຕ່າງກັນ ເພື່ອຊອກຫາສິ່ງທີ່ຊ່ວຍໃຫ້ລາວເຫັນດີທີ່ສຸດ.



ການເບິ່ງລາຍລະອຽດໃນຂໍ້ປີກຍ່ອຍຂອງເດັກນ້ອຍນີ້ເຫັນດີທີ່ສຸດ ເມື່ອແສງຢູ່ສູງກວ່າ ແລະ ຕົງລົງໃສ່ວັດຖຸ.



ນອກຈາກນັ້ນ, ຊະນິດຂອງແສງອາດຈະເຮັດໃຫ້ເຫັນແຕກຕ່າງກັນ. ເດັກນ້ອຍບາງຄົນເຫັນໄດ້ດີກັບແສງທີ່ເລັ່ງໃສ່ສິ່ງທີ່ພວກເຂົາເບິ່ງ. ຜູ້ອື່ນໆມັກເຫັນດີກັບແສງທີ່ຂະຫຍາຍກວ້າງອອກໄປ ແຕ່ວ່າຍັງມີພະລັງເຂັ້ມແຂງ

## ວັດຖຸຢູ່ໄລຍະໄກປານໃດທີ່ລູກຂ້ອຍເບິ່ງເຫັນດີທີ່ສຸດ?.

ເດັກນ້ອຍສ່ວນຫຼາຍຜູ້ທີ່ສາມາດເຫັນໜ້ອຍໜຶ່ງ ຈະເຫັນວັດຖຸທີ່ໃຫ່ຍດີທີ່ສຸດ. ແຕ່ວ່າ ເດັກນ້ອຍບາງຄົນ ສາມາດເຫັນພື້ນທີ່ນ້ອຍຢູ່ຕໍ່ໜ້າຂອງພວກເຂົາເທົ່ານັ້ນ, ໂດຍທີ່ວ່າ ເດັກນ້ອຍຄົນອື່ນໆສາມາດເຫັນວັດຖຸທີ່ຢູ່ໄລຍະໄກໄດ້ດີ. ສິ່ງທີ່ລູກຂອງທ່ານສັງເກດເບິ່ງຢ່າງລະມັດລະວັງ ເຊັ່ນ: ການຖືວັດຖຸໃດໜຶ່ງມາຢູ່ຊື່ໜ້າຂອງລາວ, ສິ່ງນີ້ແມ່ນອາດເປັນໄປໄດ້ທີ່ວ່າເປັນໄລຍະທີ່ລາວເບິ່ງເຫັນດີທີ່ສຸດ.



ເດັກນ້ອຍຜູ້ນີ້ຈະເຫັນວັດຖຸດີທີ່ສຸດ ເມື່ອລາວເບິ່ງເຫັນວັດຖຸທີ່ຢູ່ໄລຍະທີ່ລາວຖະໜັດທີ່ສຸດ...



ແຕ່ເດັກນ້ອຍຜູ້ນີ້ຈະເຫັນວັດຖຸດີທີ່ສຸດ ເມື່ອເຂົານຳເອົາວັດຖຸເຂົ້າໃກ້.

## ໄລຍະໄກທີ່ແນ່ນອນປານໃດທີ່ລູກຂອງຂ້ອຍເບິ່ງເຫັນດີທີ່ສຸດ?.

ເດັກນ້ອຍສ່ວນຫຼາຍເກືອບໝົດທຸກຄົນຈະເຫັນວັດຖຸຢ່າງຈະແຈ້ງ ເມື່ອພວກມັນຢູ່ຊື່ຕໍ່ໜ້າ, ພວກເຂົາ ສາມາດເຫັນວັດຖຸທີ່ຢູ່ເບື້ອງທາງຂ້າງ, ເບື້ອງເທິງ ຫຼື ຢູ່ລຸ່ມຈາກສາຍຕາຂອງລາວ. ບາງຄັ້ງ ເຖິງຢ່າງໃດກໍ່ຕາມ ເດັກນ້ອຍຈະບໍ່ສາມາດເບິ່ງເຫັນໄກຈາກເບື້ອງທາງຂ້າງຂອງລາວ ຫຼື ລາວອາດຈະບໍ່ສາມາດເບິ່ງເຫັນວັດຖຸທີ່ຢູ່ອ້ອມຂ້າງນັ້ນທັງໝົດ ເຊັ່ນ: ຢູ່ຕໍ່ໜ້າ, ຢູ່ເບື້ອງທາງຂ້າງ, ຢູ່ເບື້ອງລຸ່ມ ຫຼື ຢູ່ເບື້ອງເທິງສາຍຕາຂອງລາວ. ການຢາກຮູ້ວ່າລູກຂອງທ່ານເບິ່ງເຫັນໄດ້ດີທີ່ສຸດນັ້ນ, ໃຫ້ສັງເກດເບິ່ງລາວຢ່າງໃກ້ຊິດ ເພື່ອເບິ່ງວ່າ ລາວມັກຈັບວັດຖຸໄວ້ແບບໃດ ຫຼື ລາວມັກຫຼຽວໄປເບິ່ງວັດຖຸຢູ່ບ່ອນໃດໜຶ່ງ.



ເດັກນ້ອຍຜູ້ນີ້ເບິ່ງເຫັນພຽງແຕ່ວັດຖຸຢູ່ເບື້ອງທາງຂ້າງ, ໃນການຫຼຽວເບິ່ງວັດຖຸນັ້ນ ລາວຈະເຄື່ອນໄຫວຫົວຂອງລາວໄປເບື້ອງຊ້າຍ, ເບື້ອງຂວາ ແລະ ຫຼຽວຫຼັງ.

## ວັດຖຸຂະໜາດໃດທີ່ລູກຂອງຂ້ອຍເບິ່ງເຫັນດີທີ່ສຸດ.

ເດັກນ້ອຍທີ່ເບິ່ງເຫັນໄດ້ໜ້ອຍໜຶ່ງ ຈະເບິ່ງເຫັນວັດຖຸທີ່ມີຂະໜາດໃຫຍ່ດີທີ່ສຸດ. ແຕ່ວ່າ ເດັກນ້ອຍບາງຄົນຈະເບິ່ງເຫັນພຽງແຕ່ຂອບເຂດພື້ນທີ່ນ້ອຍໆ ຢູ່ຕໍ່ໜ້າໄດ້ດີ. ເດັກນ້ອຍເຫຼົ່ານີ້ຈະຈື່ວັດຖຸນ້ອຍໆ ງ່າຍກວ່າວັດຖຸທີ່ມີຂະໜາດໃຫຍ່. ສັງເກັດເບິ່ງລູກຂອງເຈົ້າໃນເວລາທີ່ ລາວເບິ່ງຂະໜາດຂອງວັດຖຸທີ່ລາວມັກຫຼິ້ນຢູ່ກັບມັນ.



ເດັກນ້ອຍຜູ້ນີ້ ມັກຫຼິ້ນກັບວັດຖຸທີ່ມີຂະໜາດນ້ອຍ ເພາະວ່າລາວເບິ່ງເຫັນມັນດີທີ່ສຸດ



ເດັກນ້ອຍຜູ້ນີ້ ຈະເຫັນວັດຖຸທີ່ມີຂະໜາດໃຫຍ່ດີທີ່ສຸດ.

## ລູກຂອງຂ້ອຍຈະຮູ້ບໍ່ວ່າວັດຖຸຢູ່ໄກຈາກລາວປານໃດ?.

ເດັກນ້ອຍບາງຄົນຈະຍາກໃນການຕັດສິນໃຈໃນການຮັບຮູ້ວ່າວັດຖຸຢູ່ໄກປານໃດ, ດັ່ງນັ້ນ ເມື່ອລາວຊອກຫາວັດຖຸນັ້ນອາດຈະຢູ່ໄລຍະໄກເກີນໄປ ຫຼື ພວກເຂົາອາດຈະບໍ່ໄປເຖິງພວກມັນພຽງພໍ ເພາະວ່າລາວຄິດວ່າວັດຖຸນັ້ນຢູ່ໃກ້ພຽງພໍແລ້ວ. ໃນການຢາກຮູ້ວ່າລູກຂອງເຈົ້າຮັບຮູ້ເຖິງໄລຍະຫ່າງ, ສັງເກດເບິ່ງເມື່ອລາວໄປຮອດຂອງຫຼິ້ນ ຫຼື ວັດຖຸແລ້ວລາວຈະເຮັດແນວໃດ.



ເດັນນ້ອຍຜູ້ນີ້ຄິດວ່າ ກວດແກ້ວຢູ່ໄກ ຈິນຢື້ບໍ່ເຖິງ.



ເດັກນ້ອຍຜູ້ນີ້ ຫຼິ້ນຢູ່ກັບໝໍ້ກະທະກົ້ນແບນ ທີ່ມີສີດໍາເຂັ້ມ ເພາະວ່າລາວສາມາດເຫັນມັນໄດ້ດີກວ່າບ່ວງ

## ລູກຊາຍຂອງຂ້ອຍມັກສີຈິງ ຫຼື ສີຈໍາລອງເມື່ອວາງໄວ້ຢູ່ລະຫວ່າງສີຈິງ.

ເດັກນ້ອຍບາງຄົນສາມາດເຫັນວັດຖຸ ເມື່ອພວກມັນມີສີແຈ້ງສະຫວ່າງ ຫຼືວ່າ ເມື່ອພວກມັນມີສີບໍ່ຕັດກັບເບື້ອງຫຼັງ. ການເບິ່ງເພື່ອຮູ້ວ່າ ຖ້າຫາກວ່າລູກຂອງທ່ານມັກສີທີ່ມີຢູ່ຫຼາຍກວ່າ, ຄວາມແຕກຕ່າງລະຫວ່າງສີ ຫຼືວ່າ ວິທີການ. ສີເຫຼົ່ານີ້ອາດຈະເປັນສີທີ່ລາວເຫັນດີທີ່ສຸດ.

## ແມ່ນຫຍັງອີກເປັນຜົນກະທົບຕໍ່ກັບແສງຕາລູກຂອງຂ້ອຍ?

ບາງຄັ້ງຄາວເດັກນ້ອຍເບິ່ງຄ້າຍຄືກັບວ່າເຫັນໄດ້ດີກວ່າເວລາອື່ນໆ. ນີ້ບໍ່ໝາຍຄວາມວ່າແສງຕາຂອງລາວ ໄດ້ປ່ຽນໄປ, ແຕ່ວ່າບາງສິ່ງບາງຢ່າງນັ້ນຫຼາຍປານໃດທີ່ຈະເປັນຜົນກະທົບຕໍ່ການເຫັນຂອງລາວ ເຊັ່ນວ່າ:

- ວັດຖຸນັ້ນລາວຮູ້ຈັກດີ ຫຼືບໍ່
- ລາວເມື່ອຍຫຼືບໍ່
- ສຸຂະພາບຂອງລາວ
- ລາວກິນຢາ ຫຼືບໍ່
- ລາວຮູ້ສຶກມ່ວນຊື່ນ ຫຼືວ່າ ໂສກເສົ້າ ຫຼືບໍ່

ເຈົ້າອາດຈຳເປັນທີ່ຈະຕ້ອງສັງເກດເບິ່ງຢ່າງຄັກແນ່ວ່າ ລູກຂອງເຈົ້າໃນສະພາບການຕ່າງໆ ແລະ ໃນເວລາທີ່ແຕກຕ່າງກັນ ເພື່ອຢາກຮູ້ວ່າລາວເຫັນດີປານໃດ.

## ການຊ່ວຍໃຫ້ລູກຂອງທ່ານໃຊ້ແສງຕາທີ່ມີ.

**ຖ້າຫາກວ່າລູກຂອງທ່ານສາມາດເຫັນໜ້ອຍໜຶ່ງ:**

ເອົາວັດຖຸຫຼາຍອັນທີ່ແຕກຕ່າງກັນໃຫ້ລາວເບິ່ງ ນີ້ຈະເປັນການສົ່ງເສີມໃຫ້ລາວກາຍໄປສົນໃຈໃນທຸກສິ່ງທຸກຢ່າງຢູ່ອ້ອມໂຕຂອງລາວ ແລະ ໃຊ້ສາຍຕາຂອງລາວຫຼາຍຂຶ້ນ.





ວິທີດີໜຶ່ງທີ່ຈະສະແດງໃຫ້ລາວຮູ້ຄວາມແຕກຕ່າງຄືການຍ່າງອ້ອມເຮືອນ. ບອກກ່ຽວກັບ ສິ່ງທີ່ເຈົ້າເຫັນ, ແລະ ສົ່ງເສີມໃຫ້ລາວໄດ້ສຳຜັດພ້ອມທັງຈັບສິ່ງຂອງນັ້ນ.

ປ່ອຍໃຫ້ລູກຂອງທ່ານຈັບສິ່ງຂອງ ຫຼືວ່າ ເຄື່ອນຍ້າຍຮ່າງກາຍຂອງລາວໃນທາງທີ່ຊ່ວຍໃຫ້ລາວເຫັນດີທີ່ສຸດ, ເຖິງແມ່ນວ່າມັນເບິ່ງອຶດອັດສໍາລັບທ່ານກໍ່ຕາມຕົວຢ່າງເຊັ່ນ:



ຖ້າຫາກວ່າລູກຂອງທ່ານເຫັນພຽງແຕ່ພື້ນທີ່ນ້ອຍໆຢູ່ຕໍ່ໜ້າຂອງລາວ, ຖ້າຫາກວ່າລາວເບິ່ງຂຶ້ນທາງເທິງເບິ່ງລົງທາງລຸ່ມ, ເບິ່ງໄປທາງເບື້ອງຂວາ ແລະ ທາງເບື້ອງຊ້າຍໃນຂະນະທີ່ລາວເຄື່ອນທີ່ໄປທາງໜ້າ.

ຖ້າຫາກວ່າລູກຂອງທ່ານສາມາດເຫັນໜ້ອຍໜຶ່ງ, ພະຍາຍາມປ່ຽນທັງໝົດຂອງແສງໄຟ, ຊະນິດຂອງແສງສະຫວ່າງ ຫຼືວ່າທິດທາງຂອງແສງສະຫວ່າງມາ ເບິ່ງສິ່ງທີ່ລາວເຮັດໄດ້ດີທີ່ສຸດ.





ຖ້າຫາກວ່າລາວມີບັນຫາກັບການເບິ່ງ ເມື່ອຈໍານວນທັງໝົດຂອງແສງສະຫວ່າງປ່ຽນ, ສິດສອນໃຫ້ຢຸດການເຄື່ອນຍ້າຍ ເພື່ອລໍຖ້າການປັບຕົວຂອງສາຍຕາຂອງລາວ.

ສັງເກດເບິ່ງຖ້າຫາກລູກຂອງທ່ານມີແນວໂນ້ມທີ່ຈະຕັ້ງໃຈແນ່ນອນ:

- ຈຳພວກສີ • ຮູບແບບ • ຂະໜາດ • ການສົມທຽບຄວາມແຕກຕ່າງຂອງສີ



ຖ້າຫາກວ່າລາວຮັບຮູ້, ເຈົ້າສາມາດໃຊ້ສິ່ງທີ່ລາວມັກຫຼາຍກວ່າເຫຼົ່ານີ້ ເພື່ອຊ່ວຍລາວຮຽນ ແລະ ເຄື່ອນຍ້າຍວັດຖຸ ຢ່າງປອດໄພ.



ເພື່ອຢາກຮູ້ ແລະ ເຂົ້າໃຈສິ່ງທີ່ເດັກນ້ອຍມັກ, ແມ່ຜູ້ນີ້ ກິ້ງສິ່ງທີ່ມົນມີສີແຈ້ງສະຫວ່າງ ຜ່ານຜ້າປູສີຂາວ.

ໃຊ້ສີທີ່ແຈ້ງສະຫວ່າງ ເພື່ອໝາຍຂອບຂອງວັດຖຸ ຫຼືວ່າ ຜ່ານຜ້າປູສີຂາວ. ຊ່ວຍໃຫ້ລາວຮຽນຈື່ ປະເພດວັດຖຸ ແລະ ສະຖານທີ່ໄດ້ງ່າຍດາຍ.




ເມື່ອລາວໃຫຍ່ຂຶ້ນວັດຖຸ, ເສື້ອຜ້າ, ຫຼືວ່າ ໂບມັດຜົມທີ່ມີສີແຈ້ງສາມາດຊ່ວຍໃຫ້ລາວຮູ້ວ່າລາວຢູ່ໃສ.



ບ່ອນທີ່ຕິດດ້ວຍເທັບ ຫຼືວ່າ ທາສີຢ່າງແຈ້ງສະຫວ່າງ ສາມາດຊ່ວຍໃຫ້ເດັກນ້ອຍຮູ້ວ່າຄວາມສູງຂອງພື້ນປ່ຽນ.

## ຕາຂອງລູກຂ້ອຍຈະມີຜົນຮ້າຍແຮງຂຶ້ນບໍ່?

ການທີ່ຈະຕອບຄຳຖາມນີ້, ເຈົ້າຈະຕ້ອງການຮູ້ສາເຫດອັນໃດຫຍຸ້ງຍາກຕໍ່ການເບິ່ງຂອງລູກເຈົ້າ. ສຳລັບຂໍ້ມູນເພີ່ມຕື່ມ, ເບິ່ງຢູ່ບົດ "ເປັນຫຍັງພວກເດັກນ້ອຍຈຶ່ງສູນເສຍສາຍຕາຂອງພວກເຂົາ ແລະ ສິ່ງໃດທີ່ພວກເຮົາສາມາດເຮັດ", ໜ້າທີ 155.